# ກອງປະຊຸມຜູ້ບໍລິຫານການສຶກສາ-ກິລາ ທົ່ວປະເທດ ປະຈໍາປີ 2022










ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາທົ່ວປະເທດ ປະຈຳປີ 2022 ໄດ້ໄຂຂຶ້ນຢ່າງເປັນທາງການ ເມື່ອວັນທີ 7 ກຸມພາ 2023 ທີ່ຫ້ອງວ່າການປົກຄອງແຂວງຫຼວງພະບາງ, ໂດຍພາຍໃຕ້ການເປັນປະທານຮ່ວມຂອງທ່ານ ຮສ.ປອ ພຸດ ສິມມາລາວົງ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ, ທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການສູນກາງພັກ, ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ, ທ່ານ ບຸນເລື່ອມ ມະນີວົງ ຮອງເຈົ້າແຂວງຫຼວງພະບາງ, ທ່ານ ນາງ ຂັນທະລີ ສິຣິພົງພັນ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກະລາ, ມີອະດີດການນຳຂັ້ນສູງກະຊວງ, ຮອງລັດຖະມົນຕີ, ອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ, ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ທົ່ວປະເທດ, ຜູ້ອຳນວຍການສະຖາບັນ, ສູນ ຕະຫຼອດຮອດພະນັກງານ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມແບບເຊິ່ງໜ້າ ແລະ ອອນລາຍ.

ໃນກອງປະຊຸມ, ທ່ານ ຮສ.ປອ ພຸດ ສິມມາລາວົງ ໄດ້ກ່າວເປີດກອງປະຊຸມ ພ້ອມມີຄຳເຫັນວ່າ: ກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາທົ່ວປະເທດ ປະຈຳປີ 2022 ຈະໄດ້ສຸມໃສ່ສະພາບບັນຫາທີ່ຍັງຄົງຄ້າງໃນປີຜ່ານມາ ແລະ ກຳນົດມາດຕະການໃນການແກ້ໄຂຢ່າງມີຈຸດສຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ໃນສະພາບປັດຈຸບັນ ໝາຍຄວາມວ່າ ໃນສະພາບທີ່ພວກເຮົາຍັງໄດ້ຮັບງົບປະມານເທົ່າເກົ່າຄືກັບປີຜ່ານມາ ຈະນຳໃຊ້ເງິນນັ້ນໃຫ້ເກີດປະສິດພາບສູງສຸດຄືແນວໃດ ແລະ ສະພາບຂອງຄູຍັງຈະສືບຕໍ່ໄດ້ນ້ອຍກວ່າເກົ່າ ພ້ອມທັງຮຽກຮ້ອງໃຫ້ບັນດາຜູ້ທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຈົ່ງປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ແລະ ຖືກຕາມຈຸດໝາຍ ສາມາດນຳໄປຈັດຕັ້ງປະຕິບັດໄດ້ ແນໃສ່ເຮັດໃຫ້ວຽກງານໃນຂະແໜງການສຶກສາມີບາດກ້າວທີ່ດີ ແລະ ພັດທະນາຂຶ້ນເປັນກ້າວໆ. ສຳລັບທ່ານຜູ້ແທນທີ່ເຂົ້າຮ່ວມຢູ່ທາງໄກສາມາດສົ່ງຄຳຖາມມາຜ່ານເບີຂອງກອງເລຂາທີ່ສະເໜີໃຫ້ທ່ານຊາບ ແລະ ຜ່ານຂໍ້ຄວາມຂອງກຸ່ມໄດ້. ສຳລັບກອງປະຊຸມໃນຄັ້ງນີ້, ແມ່ນໄດ້ດຳເນີນໄປເປັນເວລາ 2 ວັນ ລະຫວ່າງວັນທີ 7-8 ກຸມພາ 2023, ຊຶ່ງຜູ້ເຂົ້າຮ່ວມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ທົ່ວປະເທດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ລາຍງານຜົນການຕິດຕາມ ມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາທົ່ວປະເທດ ປະຈຳປີ 2021; ນຳສະເໜີບັນຫາການປະລະການຮຽນຂອງນັກຮຽນສາມັນສຶກສາ ແລະ ມາດຕະການແກ້ໄຂ; ບັນຫາກ່ຽວກັບຈຳນວນນັກສຶກສາເຂົ້າຮຽນໃນສາຍການສຶກສາຊັ້ນສູງຫຼຸດລົງ ແລະ ທິດທາງໃນການແກ້ໄຂ; ກ່ຽວກັບບັນຫາ ແລະ ສິ່ງທ້າທາຍຂອງວຽກງານອາຊີວະສຶກສາ; ນຳສະເໜີການຫັນປ່ຽນຈາກມະຫາວິທະຍາໄລທີ່ເຮັດໜ້າທີ່ສິດສອນ ເປັນມະຫາວິທະຍາໄລທີ່ເຮັດໜ້າທີ່ສິດສອນ ແລະ ວິໄຈ; ທັດສະນະສຶກສາ ໂຮງຮຽນສຶກສາພິເສດ ແຂວງຫຼວງພະບາງ; ສະເໜີສະພາບ ແລະ ທິດທາງໃນການແກ້ໄຂບັນຫາການຂາດແຄນຄູສອນ; ແນວທາງໃນການປັບປຸງຄຸນນະພາບການສຶກສາຂັ້ນພື້ນຖານໃນສະພາບປັດຈຸບັນ; ລາຍງານຜົນສຳເລັດ ການຈັດງານມະຫະກຳກິລາແຫ່ງຊາດ ຄັ້ງທີ XI ທີ່ແຂວງຊຽງຂວາງ; ລາຍງານກ່ຽວກັບແຜນການນຳໃຊ້ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ. ນອກຈາກນັ້ນ, ຄະນະປະທານ, ອະດີດການນຳຂັ້ນສູງ ແລະ ບັນດາຜູ້ແທນທີ່ເຂົ້າຮ່ວມຍັງໄດ້ພ້ອມກັນປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບ ເພື່ອເຮັດໃຫ້ໄດ້ເນື້ອໃນທີ່ຄົບຖ້ວນ ແລະ ສົມບູນຂຶ້ນ.